ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 2 ສະບັບທີ 3 (ເດືອນ ມີຖຸນາ, 2026) ໜ້າ 115 – 122
Lao Journal of Sustainable Teacher Education SALAVAN Teacher Training College, Volume 2 No 3 (June, 2026) Page 115 – 122
ISSN (Print): 0056-3080
ISSN (Online): 3107-2992

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ສຶກສາການນຳໃຊ້ກິດຈະກຳເຂົ້າໃນການຮຽນ-ການສອນ ວິຊາ Grammar 3 ວິທະຍາໄລຄູສົງຈຳປາສັກ ແຂວງຈຳປາສັກ 2022-2023

# The Study Using Activity Grammar 3 in Teaching and Learning At Champasak Buddhist Teacher Training College, Academic Year 2022-2023

**ຄຳພຸດ ວິມົນຈິດ**[1]
**Khamphouth vimonchith**[1]

## ບົດຄັດຫຍໍ້

ການສຶກສາຄົ້ນຄວ້າຄັ້ງນີ້ ແມ່ນແນໃສ່ສຶກສາການນຳໃຊ້ກິດຈະກຳເຂົ້າໃນການຮຽນ-ການສອນ ວິຊາ Grammar 3 ຢູ່ ວິທະຍາໄລຄູສົງຈຳປາສັກ ແຂວງຈຳປາສັກ ໃນສົກຮຽນ 2022-2023. ການສຶກສາໄດ້ເນັ້ນໃສ່ 2 ດ້ານຫຼັກ ຄື: ດ້ານການຈັດກິດຈະກຳການຮຽນ-ການສອນ ແລະ ດ້ານການປະເມີນຜົນການຮຽນ-ການສອນ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາ ແມ່ນໄດ້ກຳນົດຂະໜາດໂດຍນຳໃຊ້ຕາຕະລາງຂອງ Krejcie and Morgan ເຊິ່ງປະກອບມີ: ຄະນະອຳນວຍການ 2 ທ່ານ, ຄູສອນ 4 ທ່ານ, ແລະ ນັກສຶກສາ 22 ອົງ. ເຄື່ອງມືຫຼັກທີ່ໃຊ້ເຂົ້າໃນການເກັບກຳຂໍ້ມູນແມ່ນແບບສອບຖາມມາດຕະຖານ 5 ລະດັບ ຈຳນວນ 22 ຂໍ້. ການວິເຄາະຂໍ້ມູນແມ່ນໄດ້ນຳໃຊ້ສະຖິຕິພັນລະນາ ເພື່ອຊອກຫາຄ່າສ່ວນຮ້ອຍ ແລະ ຄ່າສະເລ່ຍ.

**ຜົນການຄົ້ນຄວ້າພົບວ່າ:**

1. **ດ້ານການຈັດກິດຈະກຳການຮຽນ-ການສອນ:** ຄວາມຄິດເຫັນໂດຍລວມຕໍ່ກັບການຈັດກິດຈະກຳຂອງຄູແມ່ນຢູ່ໃນລະດັບຫຼາຍ ($\bar{X}$= 3.57). ສິ່ງນີ້ສະແດງໃຫ້ເຫັນວ່ານັກສຶກສາມີສ່ວນຮ່ວມ, ມີຄວາມຫ້າວຫັນ ແລະ ມີຄວາມຕັ້ງໃຈໃນການຮຽນ, ພ້ອມທັງຄູກໍ່ຍອມຮັບແນວຄວາມຄິດທີ່ແຕກຕ່າງຂອງນັກສຶກສາ. ເພື່ອຮັກສາສະພາບແວດລ້ອມການຮຽນທີ່ໜ້າສົນໃຈ ແລະ ເພີດເພີນ, ຄູຈຳເປັນຕ້ອງພັດທະນາວິທີການສອນ ແລະ ກິດຈະກຳໃຫ້ມີຄວາມຫຼາກຫຼາຍຢູ່ຕະຫຼອດເວລາ.

---

[1] ວິທະຍາໄລຄູສົງຈຳປາສັກ/ ສປປ ລາວ.

Corresponding author: Khamphouth VIMONCHITH, Kpvimonchith12@gmail.com,Tel: +8562099824898

2. **ດ້ານການປະເມີນຜົນການຮຽນ-ການສອນ:** ຄວາມຄິດເຫັນໂດຍລວມຂອງທັງຄູ ແລະ ນັກສຶກສາ ຕໍ່ກັບການປະເມີນຜົນແມ່ນຢູ່ໃນລະດັບຫຼາຍ ($\bar{X}$ = 3.95). ນີ້ໝາຍຄວາມວ່າການປະເມີນຜົນມີຄວາມສອດຄ່ອງກັບຫຼັກສູດການຮຽນ-ການສອນ. ນອກຈາກນີ້, ຄູໄດ້ມີການທົບທວນບົດຮຽນເກົ່າຢ່າງເປັນປົກກະຕິກ່ອນທີ່ຈະສອນບົດໃໝ່. ຜົນການສຶກສາສະເໜີແນະວ່າ ຄູຄວນນໍາໃຊ້ບົດຝຶກຫັດ ຫຼື ວຽກມອບໝາຍໃນຮູບແບບທີ່ຫຼາກຫຼາຍຕື່ມອີກໃນເວລາສອນ.

ໂດຍລວມແລ້ວ, ການນໍາໃຊ້ກິດຈະກໍາເຂົ້າໃນການຮຽນ–ການສອນ ວິຊາ Grammar 3 ສໍາລັບນັກສຶກສາສາຍຄູພາສາອັງກິດ ປີ 2 ທີ່ ວິທະຍາໄລຄູສົງຈໍາປາສັກ ແມ່ນມີປະສິດທິຜົນສູງ ທັງໃນດ້ານການຈັດກິດຈະກໍາການຮຽນ–ການສອນ ແລະ ດ້ານການປະເມີນຜົນ. ນັກສຶກສາໄດ້ເຂົ້າຮ່ວມໃນກິດຈະກໍາການຮຽນ ແລະ ການປະເມີນຜົນທີ່ຫຼາກຫຼາຍ, ແລະ ຄູກໍ່ໄດ້ເປີດໂອກາດໃຫ້ນັກສຶກສາສະແດງຄວາມຄິດເຫັນ. ເຖິງຢ່າງໃດກໍຕາມ, ເນື່ອງຈາກບາງກິດຈະກໍາການຮຽນຍັງບໍ່ທັນດຶງດູດ ຫຼື ສ້າງຄວາມເພີດເພີນໃຫ້ນັກສຶກສາໄດ້ດີເທົ່າທີ່ຄວນ, ດັ່ງນັ້ນ ຈຶ່ງຂໍສະເໜີໃຫ້ຄູສືບຕໍ່ພັດທະນາວິທີການສອນ ແລະ ກິດຈະກໍາໃຫ້ມີຄວາມຫຼາກຫຼາຍ ເພື່ອດຶງດູດຄວາມສົນໃຈ ແລະ ຍົກລະດັບປະສິດທິຜົນໃນການຮຽນ–ການສອນໃຫ້ສູງຂຶ້ນ.

**ຄໍາສັບສໍາຄັນ:** ການຮຽນຄໍາສັບພາສາອັງກິດ, ເກມ, ທັກສະການສອນ.

## Abstract

This research investigated the use of activities in teaching and learning Grammar 3 at Champasak Buddhist Teacher Training College, Champasak Province, during the 2022-2023 academic year. The study focused on two main aspects: the organization of teaching and learning activities, and the evaluation of teaching and learning. The sample group, determined using the Krejcie and Morgan sampling method, consisted of 2 directors, 4 teachers, and 22 students. The primary research instrument was a 5-level standard questionnaire comprising 22 questions. Data were analyzed using descriptive statistical tables to determine percentages and averages.

**The research results were found as follows:**

1. **In terms of teaching and learning activities:** The overall opinion regarding the teachers' organization of learning activities was at a high level ($\bar{X}$= 3.57). This indicates that students are actively involved and committed to their learning, and that teachers are receptive to diverse student perspectives. To maintain engaging and enjoyable learning environments, teachers must continuously develop diverse teaching methods and activities.

2. **In terms of the evaluation of teaching and learning:** The overall opinion concerning evaluation by both teachers and students was also at a high level ($\bar{X}$ = 3.95). This demonstrates that the evaluation methods align well with the curriculum. Furthermore, teachers regularly reviewed previous lessons before introducing new topics. The findings suggest that teachers should incorporate a wider variety of exercises and assignments during their instruction.

Overall, the integration of activities in teaching and learning Grammar 3 for second-year English teacher trainees at Champasak Buddhist Teacher Training College was highly effective in terms of both activity organization and evaluation. Students actively participated in diverse learning and assessment activities, and teachers successfully created opportunities for students to express their opinions. However, as some activities lacked appeal or enjoyment for students, it is recommended that teachers continue to diversify their instructional methods and activities to sustain student interest and enhance overall teaching and learning effectiveness.

**Keywords:** English vocabulary learning, games, teaching skills.

## ບົດນຳ

ໃນສັງຄົມໂລກປັດຈຸບັນ, ການຮຽນພາສາຕ່າງປະເທດ, ໂດຍສະເພາະພາສາອັງກິດເຊິ່ງເປັນພາສາສາກົນ, ແມ່ນມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງຕໍ່ການດຳລົງຊີວິດ ເພາະເປັນເຄື່ອງມືຫຼັກໃນການສື່ສານ, ການສຶກສາ, ເສດຖະກິດ-ສັງຄົມ, ການຊອກຫາຄວາມຮູ້ ແລະ ການແລກປ່ຽນວັດທະນະທຳ. ການມີຄວາມສາມາດດ້ານພາສາອັງກິດຊ່ວຍໃຫ້ຜູ້ຮຽນເຂົ້າໃຈຄວາມຫຼາກຫຼາຍທາງທັດສະນະຂອງສັງຄົມໂລກ, ສາມາດປັບຕົວ ແລະ ພັດທະນາຕົນເອງໃຫ້ທັນກັບການປ່ຽນແປງຢ່າງວ່ອງໄວ (ກະມົນວັນ ໂສມສີຟ້າ, 2008). ເພື່ອໃຫ້ບັນລຸຈຸດປະສົງດັ່ງກ່າວ, ຜູ້ຮຽນຕ້ອງໄດ້ຮັບການປູກຝັງທັດສະນະຄະຕິທີ່ດີຕໍ່ການສຶກສາ. ໃນຂະບວນການນີ້, ຄູສອນມີບົດບາດສຳຄັນທີ່ສຸດໃນການຈັດການຮຽນຮູ້ ໂດຍຕ້ອງຮູ້ຈັກນຳໃຊ້ເຕັກນິກ ແລະ ຈັດກິດຈະກຳທີ່ສ້າງສັນ, ຫຼາກຫຼາຍ ແລະ ເໝາະສົມກັບລະດັບຄວາມສາມາດຂອງຜູ້ຮຽນ ເພື່ອຊ່ວຍໃຫ້ເຂົາເຈົ້າສາມາດນຳໃຊ້ພາສາອັງກິດໃນຊີວິດປະຈຳວັນໄດ້ຢ່າງມີປະສິດທິພາບ (ຊານໄຊ ສະຣິໄສຍະເພັດ, 1984).

ສຳລັບ ສປປ ລາວ, ການສຶກສາແມ່ນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດ ເພື່ອຍົກລະດັບຄວາມຮູ້ ແລະ ສ້າງປັນຍາຊົນໃຫ້ມີຄວາມກ້າວໜ້າ (ເອກະສານແຜນພັດທະນາຂະແໜງການສຶກສາແລະກິລາ, 2025). ອີງຕາມທິດທາງການພັດທະນາການສຶກສາ, ກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ (2011) ໄດ້ວາງນະໂຍບາຍໃຫ້ເອົາໃຈໃສ່ວຽກງານການສຶກສາ ໂດຍຜັນຂະຫຍາຍ 5 ຫຼັກມູນຂອງການສຶກສາ ເພື່ອຮັບປະກັນການພັດທະນາບຸກຄະລິກກະພາບຢ່າງຮອບດ້ານ (ເອກະສານກະຊວງສຶກສາ ແລະ ກິລາ, 2013). ພ້ອມດຽວກັນນັ້ນ, ຍຸດທະສາດການພັດທະນາການສຶກສາ ແລະ ກິລາ ຮອດປີ 2025 ຍັງໄດ້ເລັ່ງໃສ່ການປັບປຸງຄຸນນະພາບການກໍ່ສ້າງຄູ, ການພັດທະນາກຳລັງແຮງງານໃຫ້ສອດຄ່ອງກັບຄວາມຕ້ອງການຂອງສັງຄົມ, ແລະ ການສ້າງນັກວິຊາການເພື່ອແຂ່ງຂັນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້ (ໄກສອນ ພົມວິຫານ, 1974).

ສະເພາະຢູ່ ວິທະຍາໄລຄູສົງຈຳປາສັກ, ຫຼັກສູດການຮຽນ-ການສອນລວມມີຫຼາຍວິຊາ, ເຊິ່ງໜຶ່ງໃນນັ້ນແມ່ນວິຊາພາສາອັງກິດທີ່ມີຄວາມສຳຄັນ ແລະ ຕິດພັນກັບການປະຕິບັດຕົວຈິງ. ເພື່ອໃຫ້ການຮຽນ-ການສອນບັນລຸເປົ້າໝາຍ ແລະ ໄດ້ຮັບຜົນດີ, ການນຳໃຊ້ກິດຈະກຳເຂົ້າໃນການຮຽນ-ການສອນແມ່ນສິ່ງຈຳເປັນ ເພາະຈະຊ່ວຍໃຫ້ນັກສຶກສາເຂົ້າໃຈບົດຮຽນຢ່າງຈະແຈ້ງ, ເພີ່ມປະສິດທິພາບການຮຽນຮູ້ ແລະ ສາມາດນຳໄປໝູນໃຊ້ໃນຊີວິດປະຈຳວັນໄດ້. ດ້ວຍເຫດນີ້, ຜູ້ສຶກສາຈຶ່ງມີຄວາມສົນໃຈທີ່ຈະສຶກສາການຈັດກິດຈະກຳເຂົ້າໃນການຮຽນ-ການສອນ ວິຊາ Grammar 3 ຂອງຄູ ແລະ ນັກສຶກສາ ທີ່ ວິທະຍາໄລຄູສົງຈຳປາສັກ ໃນສົກສຶກສາ 2022-2023. ຈຸດປະສົງກໍເພື່ອເປັນຂໍ້ມູນ ແລະ ເປັນແນວທາງໃຫ້ແກ່ຄູສອນໃນການນຳໄປປັບປຸງ ແລະ ພັດທະນາການຮຽນ-ການສອນໃຫ້ມີຄຸນນະພາບດີຂຶ້ນເທື່ອລະກ້າວ.

## ຈຸດປະສົງຂອງການວິໄຈ

1. ເພື່ອສຶກສາສະພາບການຈັດກິດຈະກຳການຮຽນ-ການສອນ ວິຊາ Grammar 3 ທີ່ເນັ້ນການມີສ່ວນຮ່ວມ ແລະ ຄວາມຫ້າວຫັນຂອງນັກສຶກສາ ວິທະຍາໄລຄູສົງຈຳປາສັກ
2. ເພື່ອປະເມີນປະສິດທິຜົນ ແລະ ຄວາມສອດຄ່ອງຂອງການວັດຜົນ ໃນການນຳໃຊ້ກິດຈະກຳເຂົ້າໃນການຮຽນ-ການສອນ ວິຊາ Grammar 3.

## ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ ຜູ້ຄົ້ນຄວ້າໄດ້ນຳໃຊ້ຮູບແບບການວິໄຈ **ແບບປະສົມປະສານ (Mixed Methods Research)** ເຊິ່ງລວມເອົາວິທີການສຶກສາທາງດ້ານປະລິມານ ແລະ ຄຸນນະພາບເຂົ້າກັນ ເພື່ອໃຫ້ສອດຄ່ອງກັບການ

ເກັບກຳຂໍ້ມູນຕົວຈິງ ແລະ ເຮັດໃຫ້ຜົນການສຶກສາມີຄວາມຄົບຖ້ວນ, ເລິກເຊິ່ງ ແລະ ໜ້າເຊື່ອຖືຫຼາຍຂຶ້ນ. ຂັ້ນຕອນໃນການດຳເນີນການວິໄຈມີລາຍລະອຽດດັ່ງນີ້:

**1. ປະຊາກອນ ແລະ ກຸ່ມຕົວຢ່າງ**

- **ປະຊາກອນ:** ປະຊາກອນທີ່ໃຊ້ເຂົ້າໃນການວິໄຈຄັ້ງນີ້ ໄດ້ແກ່ ຜູ້ບໍລິຫານ, ຄູສອນ ແລະ ນັກສຶກສາສາຍຄູພາສາອັງກິດ ປີ 2 ທີ່ວິທະຍາໄລຄູສິງຈຳປາສັກ. ປະຊາກອນທັງໝົດມີຈຳນວນ 30 ທ່ານ/ອົງ ເຊິ່ງປະກອບມີ ຜູ້ບໍລິຫານ 3 ທ່ານ, ຄູສອນ 5 ທ່ານ ແລະ ນັກສຶກສາ 22 ອົງ.
- **ກຸ່ມຕົວຢ່າງ:** ການກຳນົດຂະໜາດຂອງກຸ່ມຕົວຢ່າງແມ່ນໄດ້ທຽບຈາກຕາຕະລາງສຳເລັດຮູບຂອງ Krejcie and Morgan (1970). ກຸ່ມຕົວຢ່າງທີ່ໄດ້ຮັບຕົວຈິງມີຈຳນວນທັງໝົດ 28 ທ່ານ/ອົງ ເຊິ່ງປະກອບດ້ວຍຄະນະອຳນວຍການ 2 ທ່ານ, ຄູສອນ 4 ທ່ານ, ແລະ ນັກສຶກສາ 22 ອົງ.

**2. ເຄື່ອງມືການວິໄຈ**

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ ປະກອບມີທັງຮູບແບບປະລິມານ ແລະ ຄຸນນະພາບ ດັ່ງນີ້:

- **ແບບສອບຖາມ (Questionnaire):** ເປັນແບບມາດຕາສ່ວນປະມານຄ່າ (Likert Scale) 5 ລະດັບ ເຊິ່ງມີຄຳຖາມທັງໝົດ 22 ຂໍ້. ເຄື່ອງມືນີ້ມີຄ່າຄວາມເຊື່ອໝັ້ນ (Cronbach's Alpha) ເທົ່າກັບ 0.89.
- **ແບບສຳພາດເຈາະເລິກ (In-depth Interview) ແລະ ແບບສັງເກດການສອນ:** ສຳລັບແບບສັງເກດການສອນແມ່ນມີລາຍການປະເມີນ 7 ດ້ານ ເຊິ່ງມີຄ່າຄວາມເຊື່ອໝັ້ນ (Cohen's Kappa) ເທົ່າກັບ 0.85 ເຊິ່ງເປັນການຢັ້ງຢືນເຖິງຄຸນນະພາບສູງຂອງເຄື່ອງມືທີ່ນຳໃຊ້.

**3. ການສ້າງເຄື່ອງມື ແລະ ການເກັບກຳຂໍ້ມູນ**

ຜູ້ວິໄຈໄດ້ດຳເນີນຕາມລຳດັບຂັ້ນຕອນໃນການສ້າງເຄື່ອງມື ແລະ ເກັບກຳຂໍ້ມູນດັ່ງນີ້:

- ສຶກສາເອກະສານທີ່ກ່ຽວຂ້ອງກັບຫົວຂໍ້ວິໄຈ ແລະ ອີງໃສ່ປະສົບການສອນຕົວຈິງ ເພື່ອນຳມາສ້າງເປັນແບບສອບຖາມໃຫ້ສອດຄ່ອງກັບບັນຫາທີ່ຕ້ອງການສຶກສາ.
- ສ້າງແບບສອບຖາມໂດຍແບ່ງອອກເປັນ 2 ດ້ານຫຼັກ ຄື: ດ້ານການຈັດກິດຈະກຳການຮຽນ-ການສອນ ແລະ ດ້ານການປະເມີນຜົນໃນການຮຽນ-ການສອນຂອງຄູ ແລະ ນັກສຶກສາ ວິທະຍາໄລຄູສິງ.
- ເຮັດໜັງສືສະເໜີເຖິງຜູ້ອຳນວຍການວິທະຍາໄລຄູສິງຈຳປາສັກ ເພື່ອແຈ້ງຈຸດປະສົງ, ຕິດຕໍ່ພົວພັນ ແລະ ຂໍອະນຸຍາດລົງເກັບກຳຂໍ້ມູນຈາກຄູ-ອາຈານ ແລະ ນັກສຶກສາ.
- ພາຍຫຼັງໄດ້ຮັບອະນຸຍາດ, ຜູ້ວິໄຈໄດ້ນຳເອົາແບບສອບຖາມໄປຢາຍໃຫ້ແກ່ກຸ່ມຕົວຢ່າງ, ຈາກນັ້ນຈຶ່ງເກັບລວບລວມ, ສະຫຼຸບ ແລະ ນຳສະເໜີຂໍ້ມູນຕາມລຳດັບ.

**4. ການວິເຄາະຂໍ້ມູນ**

ການວິເຄາະຂໍ້ມູນໄດ້ແບ່ງອອກເປັນ 3 ສ່ວນຫຼັກ ເພື່ອໃຫ້ກວມເອົາການວິເຄາະທຸກມິຕິ:

- **ການວິເຄາະເຊິ່ງປະລິມານ (Quantitative Analysis):** ນຳໃຊ້ສະຖິຕິພັນລະນາ (Descriptive Statistics) ໂດຍຊອກຫາຄ່າສ່ວນຮ້ອຍ (%) ສຳລັບຂໍ້ມູນສ່ວນຕົວ, ຄ່າສະເລ່ຍ ($\bar{X}$), ແລະ ຄ່າຜັນປ່ຽນມາດຕະຖານ (S.D.) ເພື່ອພັນລະນາຜົນກະທົບ. ພ້ອມກັນນັ້ນ ຍັງໄດ້ໃຊ້ສະຖິຕິອະນຸມານ (Inferential Statistics) ປະເພດ t-test ເພື່ອສົມທຽບຄວາມແຕກຕ່າງໃນການເຂົ້າເຖິງການຝຶກອົບຮົມ.
- **ການວິເຄາະເຊິ່ງຄຸນນະພາບ (Qualitative Analysis):** ນຳໃຊ້ການວິເຄາະເນື້ອໃນ (Content Analysis) ເພື່ອກຳນົດຫົວຂໍ້ຫຼັກ (Themes) ທີ່ໄດ້ຈາກຂໍ້ມູນການສຳພາດ ແລະ ຂໍ້ສັງເກດ.

- **ການເຊື່ອມໂຍງຂໍ້ມູນ (Triangulation):** ໃຊ້ວິທີປຽບທຽບຜົນຈາກສາມແຫຼ່ງຂໍ້ມູນ ເພື່ອຢັ້ງຢືນຄວາມໜ້າເຊື່ອຖືຂອງຂໍ້ມູນເຂົ້າຫາກັນ ຕົວຢ່າງເຊັ່ນ: ການນໍາໃຊ້ຜົນການສັງເກດການສອນຕົວຈິງ ມາຢັ້ງຢືນການຂາດການນໍາໃຊ້ ICT ຫຼື ການປະເມີນແບບ Formative Assessment ຕາມທີ່ຄູໄດ້ລາຍງານ.

ສໍາລັບການແປຄວາມໝາຍຂອງຄ່າສະເລ່ຍໃນແບບສອບຖາມ ແມ່ນໄດ້ກໍານົດເກນການແປຜົນຂອງ ບຸນຊົມ ສີສະອາດ (2008:1) ດັ່ງນີ້:

- ຄ່າສະເລ່ຍລະຫວ່າງ 4.51 - 5.00 ໝາຍຄວາມວ່າ ເຫັນດີຫຼາຍທີ່ສຸດ.
- ຄ່າສະເລ່ຍລະຫວ່າງ 3.51 - 4.50 ໝາຍຄວາມວ່າ ເຫັນດີຫຼາຍ.
- ຄ່າສະເລ່ຍລະຫວ່າງ 2.51 - 3.50 ໝາຍຄວາມວ່າ ເຫັນດີປານກາງ.
- ຄ່າສະເລ່ຍລະຫວ່າງ 1.51 - 2.50 ໝາຍຄວາມວ່າ ເຫັນດີໜ້ອຍ.
- ຄ່າສະເລ່ຍລະຫວ່າງ 1.00 - 1.50 ໝາຍຄວາມວ່າ ເຫັນດີໜ້ອຍທີ່ສຸດ

## ຜົນການວິໄຈ ແລະ ອະພິປາຍຜົນ

### ຜົນການວິໄຈ

1. ການນໍາໃຊ້ກິດຈະກໍາເຂົ້າໃນການຮຽນ - ການສອນພົບວ່າ ຄວາມຄິດເຫັນໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3,57), ຄູສົ່ງເສີມໃຫ້ນັກຮຽນເຮັດກິດຈະກໍາຮ່ວມກັນ ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=4,46), ຮອງລົງມາແມ່ນ ຄູຍອມຮັບແນວຄວາມຄິດທີ່ແຕກຕ່າງຂອງນັກຮຽນ ແມ່ນຢູ່ໃນລະ ດັບຫຼາຍ ($\bar{X}$=4,33) ສ່ວນຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍຕໍ່າທີ່ສຸດໄດ້ແກ່ ກິດຈະກໍາການຮຽນມີຄວາມໜ້າສົນ ໃຈ ແລະເພີດເພີນ ແມ່ນຢູ່ໃນລະດັບປານກາງ ($\bar{X}$=2,87).

2. ການປະເມີນຜົນການຮຽນ-ການສອນພົບວ່າ ຄວາມຄິດເຫັນໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3,95), ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ: ຂໍ້ທີ່ມີຄວາມຄິດເຫັນມີຄ່າສູງສຸດໄດ້ແກ່: ຄູຖາມນັກຮຽນໃນບົດຮຽນທີ່ໄດ້ສອນຜ່ານມາກ່ອນສອນບົດອື່ນ ແມ່ນຢູ່ໃນລະດັບຫຼາຍທີ່ສຸດ ($\bar{X}$=4,75), ຮອງລົງມາແມ່ນ : ການປະເມີນຜົນມີຄວາມສອດຄ່ອງກັບຫລັກສູດການຮຽນ-ການສອນແມ່ນຢູ່ໃນລະດັບຫຼາຍທີ່ສຸດ ($\bar{X}$=4,70), ສ່ວນຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍຕໍ່າທີ່ສຸດໄດ້ແກ່: ຄູມີການໃຫ້ບົດຝຶກຫັດເວລາສອນແລ້ວໃນລະດັບຫລາຍ ($\bar{X}$=3,75).

ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູ ໃນການສຶກການນໍາໃຊ້ກິດຈະກໍາເຂົ້າໃນການຮຽນ - ການສອນ ວິຊາ Grammar 3 ວິທະຍາໄລຄູສິງຈໍາປາສັກ ສາຍພາສາອັງກິດ ປີ 2 ສົກສຶກສາ 2022 – 2023 ພາບລວມແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3,76), ເມື່ອພິຈາລະນາແຕ່ລະດ້ານແລ້ວເຫັນວ່າ: ດ້ານທີ່ມີຄ່າສູງສຸດໄດ້ແກ່:ດ້ານການວັດ ແລະປະເມີນຜົນໃນການຮຽນ-ການສອນ ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3,95), ຮອງລົງມາແມ່ນ : ດ້ານການຈັດກິດຈະກໍາການຮຽນ-ການສອນ ແມ່ນຢູ່ໃນລະດັບຫຼາຍ ($\bar{X}$=3, 57).

### ອະພິປາຍຜົນ

ຈາກຜົນການຄົ້ນຄວ້າກ່ຽວກັບການນໍາໃຊ້ກິດຈະກໍາເຂົ້າໃນການຮຽນ-ການສອນ ວິຊາ Grammar 3 ຂອງນັກສຶກສາສາຍຄູພາສາອັງກິດ ປີ 2 ວິທະຍາໄລຄູສິງຈໍາປາສັກ ສົກສຶກສາ 2022-2023, ສາມາດນໍາມາອະພິປາຍຜົນໃນແຕ່ລະດ້ານໄດ້ດັ່ງນີ້:

**1. ດ້ານການຈັດກິດຈະກໍາເຂົ້າໃນການຮຽນ-ການສອນຂອງຄູ** ຜົນການສຶກສາພົບວ່າ ຄວາມຄິດເຫັນໂດຍລວມຕໍ່ກັບການຈັດກິດຈະກໍາແມ່ນຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາເປັນລາຍຂໍ້ພົບວ່າ ຂໍ້ທີ່ນັກສຶກສາມີສ່ວນຮ່ວມໃນການປະເມີນຜົນການຮຽນ ແລະ ຄູຍອມຮັບແນວຄວາມຄິດທີ່ແຕກຕ່າງຂອງນັກສຶກສາ ແມ່ນຢູ່ໃນລະດັບຫຼາຍທີ່ສຸດ ແລະລະດັບຫຼາຍຕາມລໍາດັບ. ຜົນການສຶກສານີ້ສ່ອງແສງໃຫ້ເຫັນວ່າ ການຈັດກິດຈະກໍາການຮຽນ-ການສອນຄວນເນັ້ນໃຫ້ຜູ້ຮຽນເປັນໃຈກາງ ເພື່ອໃຫ້ເກີດຄວາມສົນໃຈ, ເກີດການຮຽນຮູ້ ແລະ ມີແນວຄິດສ້າງສັນ. ນອກຈາກນັ້ນ,

ສຳລັບເນື້ອໃນ ຫຼື ກິດຈະກຳທີ່ໃຊ້ເວລາດົນ, ຄູສາມາດນຳໃຊ້ "ການຈັດກິດຈະກຳເສີມການຮຽນ" ຢູ່ນອກຫ້ອງຮຽນໄດ້ ເຊັ່ນ: ການສະແດງບົດບາດສົມມຸດ, ການໄປທັດສະນະສຶກສາ ແລະ ອື່ນໆ ເພື່ອເພີ່ມປະສິດທິພາບການຮຽນຮູ້.

ເຖິງຢ່າງໃດກໍຕາມ, ຜົນການສຶກສາຍັງພົບວ່າ ຂໍ້ທີ່ລະບຸວ່າ "ກິດຈະກຳການຮຽນມີຄວາມໜ້າສົນໃຈ ແລະ ເພີດເພີນ" ແມ່ນມີຄ່າສະເລ່ຍຕ່ຳສຸດ (ຢູ່ໃນລະດັບໜ້ອຍ). ສາເຫດອາດມາຈາກສະພາບແວດລ້ອມ, ສິ່ງອຳນວຍຄວາມສະດວກ ແລະ ສື່ການສອນ ຍັງບໍ່ເອື້ອອຳນວຍຕໍ່ການຈັດການຮຽນ-ການສອນເທົ່າທີ່ຄວນ. ດັ່ງນັ້ນ, ຄູຈຶ່ງຄວນພັດທະນາວິທີການສອນ ແລະ ເພີ່ມທັກສະການນຳໃຊ້ສື່ໃຫ້ຫຼາກຫຼາຍຂຶ້ນ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ຮຽນ. ສິ່ງນີ້ສອດຄ່ອງກັບງານຄົ້ນຄວ້າຂອງ ນັດຖະຊາ ສຸວະວິບູນ (2011) ທີ່ຊີ້ໃຫ້ເຫັນວ່າ ການຈັດສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຮຽນຮູ້ ແລະ ການຈັດກິດຈະກຳໃຫ້ສອດຄ່ອງກັບຄວາມສົນໃຈຂອງຜູ້ຮຽນ ແມ່ນສິ່ງສຳຄັນທີ່ຊ່ວຍໃຫ້ນັກຮຽນໄດ້ຝຶກທັກສະຂະບວນການຄິດຢ່າງມີປະສິດທິຜົນ.

**2. ດ້ານການປະເມີນຜົນການຮຽນ-ການສອນຂອງຄູ ແລະ ນັກສຶກສາ** ຜົນການສຶກສາໃນດ້ານການປະເມີນຜົນພົບວ່າ ຄວາມຄິດເຫັນໂດຍລວມແມ່ນຢູ່ໃນລະດັບຫຼາຍ. ຂໍ້ທີ່ມີຄະແນນສູງສຸດແມ່ນ ຄູໄດ້ທົບທວນຖາມນັກສຶກສາໃນບົດຮຽນເກົ່າກ່ອນເລີ່ມບົດຮຽນໃໝ່ສະເໝີ ແລະ ການປະເມີນຜົນມີຄວາມສອດຄ່ອງກັບຫຼັກສູດ (ທັງສອງຂໍ້ຢູ່ໃນລະດັບຫຼາຍ). ແຕ່ຂໍ້ທີ່ມີຄະແນນຕ່ຳສຸດແມ່ນ ຄູມີການໃຫ້ບົດຝຶກຫັດພາຍຫຼັງການສອນ (ຢູ່ໃນລະດັບປານກາງ). ຈາກຈຸດນີ້ສະແດງໃຫ້ເຫັນວ່າ ເຖິງແມ່ນວ່າຄູຈະມີການປະເມີນຜົນໃນຫ້ອງຮຽນເພື່ອປັບປຸງການສອນຂອງຕົນໃຫ້ສອດຄ່ອງກັບຫຼັກສູດຂອງກະຊວງສຶກສາທິການ ແລະ ກິລາ, ແຕ່ຍັງຈຳເປັນຕ້ອງເພີ່ມຄວາມຫຼາກຫຼາຍໃນຮູບແບບຂອງການມອບໝາຍວຽກ.

ຜົນການສຶກສາດ້ານການປະເມີນຜົນນີ້ ມີຄວາມສອດຄ່ອງກັບແນວຄວາມຄິດຂອງ Provus (1971) ທີ່ກ່າວວ່າ ການປະເມີນແມ່ນຂະບວນການທີ່ກ່ຽວຂ້ອງກັບການຕີຄວາມໝາຍຈາກເຄື່ອງມືວັດແທກທີ່ເປັນມາດຕະຖານ. ການປະເມີນບໍ່ພຽງແຕ່ເປັນການວັດແທກດ້ວຍວິທີການທາງປະລິມານເທົ່ານັ້ນ, ແຕ່ຍັງຕ້ອງຄຳນຶງເຖິງຕົວແປສຳຄັນອື່ນໆ ທີ່ອາດຖືກມອງຂ້າມໃນຂະບວນການຮຽນການສອນ ເພື່ອໃຫ້ການປະເມີນນັ້ນມີຄວາມຊື່ສັດ ແລະ ສາມາດນຳໄປປັບປຸງການຮຽນຮູ້ໄດ້ຢ່າງແທ້ຈິງ

## ສະຫຼຸບຜົນການວິໄຈ

ຈາກການສຶກສາຄົ້ນຄວ້າກ່ຽວກັບການນຳໃຊ້ກິດຈະກຳເຂົ້າໃນການຮຽນ-ການສອນ ວິຊາ Grammar 3 ຂອງນັກສຶກສາສາຍຄູພາສາອັງກິດ ປີ 2 ທີ່ວິທະຍາໄລຄູສົງຈຳປາສັກ, ສາມາດສະຫຼຸບຜົນໄດ້ດັ່ງນີ້:

ການຈັດຕັ້ງປະຕິບັດໂດຍລວມແມ່ນຈັດຢູ່ໃນລະດັບຫຼາຍ ທັງໃນດ້ານການຈັດກິດຈະກຳການຮຽນ-ການສອນ ແລະ ດ້ານການປະເມີນຜົນ. ຜົນການສຶກສາຊີ້ໃຫ້ເຫັນວ່າ ນັກສຶກສາມີສ່ວນຮ່ວມໃນຂະບວນການຮຽນ ແລະ ການປະເມີນຜົນຢ່າງຫ້າວຫັນ, ປະກອບກັບຄູສອນໄດ້ເປີດໂອກາດໃຫ້ນັກສຶກສາສາມາດສະແດງຄວາມຄິດເຫັນໄດ້ເປັນຢ່າງດີ.

ເຖິງຢ່າງໃດກໍຕາມ, ການຄົ້ນຄວ້າຍັງພົບວ່າ ບາງກິດຈະກຳການຮຽນຍັງບໍ່ທັນສາມາດດຶງດູດ ຫຼື ສ້າງຄວາມເພີດເພີນໃຫ້ແກ່ນັກສຶກສາໄດ້ເທົ່າທີ່ຄວນ. ສາເຫດສຳຄັນແມ່ນເນື່ອງມາຈາກຂໍ້ຈຳກັດທາງດ້ານສະພາບແວດລ້ອມ, ສິ່ງອຳນວຍຄວາມສະດວກ ແລະ ສື່ການສອນ ທີ່ຍັງບໍ່ທັນເອື້ອອຳນວຍ ຫຼື ຕອບສະໜອງກັບຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນໄດ້ຢ່າງເຕັມສ່ວນ.

ດັ່ງນັ້ນ, ເພື່ອຍົກລະດັບປະສິດທິຜົນໃນການຮຽນ-ການສອນໃຫ້ສູງຂຶ້ນ, ຄູສອນຈຳເປັນຕ້ອງໄດ້ພັດທະນາວິທີການສອນຢ່າງຕໍ່ເນື່ອງ, ເພີ່ມທັກສະໃນການນຳໃຊ້ສື່ການສອນທີ່ເໝາະສົມ ແລະ ຄວນອອກແບບກິດຈະກຳໃຫ້ມີຄວາມຫຼາກຫຼາຍ ເພື່ອດຶງດູດຄວາມສົນໃຈ ແລະ ສ້າງແຮງຈູງໃຈໃຫ້ແກ່ຜູ້ຮຽນໄດ້ຢ່າງມີປະສິດທິພາບ.

## ຂໍ້ສະເໜີແນະ

ຈາກການວິໄຈກ່ຽວກັບສະພາບສຶກສາໃນການນຳໃຊ້ກິດຈະກຳເຂົ້າໃນການຮຽນ - ການສອນ ວິຊາ Grammar 3 ວິທະຍາໄລຄູສິງຈຳປາສັກ ສາຍພາສາອັງກິດ ປີ 2 ສົກສຶກສາ 2022 – 2023 . ຜູ້ວິໄຈມີຂໍ້ສະເໜີ ແລະຂໍ້ສະເໜີແນະ ເພື່ອເປັນປະໂຫຍດໃນການດຳເນີນການວິໄຈໃນຄັ້ງຕໍ່ໄປ ດັ່ງນີ້:

1. ຄູຄວນໃຊ້ວິທີການຈັດການການຮຽນຮູ້, ຮຽນຮູ້ກັບຊຸດຂອງກິດຈະກຳການຮຽນ ຮຽນພາສາອັງກິດໃນຊີວິດປະຈຳວັນໂດຍໃຊ້ຮູບແບບການປະຕິບັດ ໃຊ້ພື້ນຖານການຮຽນຮູ້ເພື່ອຈັດການການຮຽນຮູ້ໃນເນື້ອໃນອື່ນໆ ໂດຍການເປີດໂອກາດໃຫ້ນັກສຶກສາໄດ້ສຶກສາຄົ້ນຄວ້າ. ທົບທວນຄວາມຮູ້ແລະກິດຈະກຳການປະຕິບັດ ອີງຕາມການກຳນົດກິດຈະກຳ ການຮຽນຮູ້ດ້ວຍຕົນເອງໃນເວລາຮຽນປົກກະຕິ ແລະນອກເວລາຮຽນ.

2. ການຈັດກິດຈະກຳການຮຽນຮູ້ດ້ວຍຊຸດກິດຈະກຳການຮຽນພາສາອັງກິດໃນຫົວຂໍ້ພາສາອັງກິດ.ໃນຊີວິດປະຈຳວັນການນຳໃຊ້ ຮູບແບບການປະຕິບັດແມ່ນພື້ນຖານສຳລັບການຄຸ້ມຄອງການຮຽນຮູ້ທີ່ເປັນສິ່ງສຳຄັນທີ່ຈະຄຳນຶງເຖິງຄວາມແຕກຕ່າງຂອງນັກຮຽນ. ດັ່ງນັ້ນ, ຄູຕ້ອງວິເຄາະນັກຮຽນແຕ່ລະຄົນ.ລໍຖ້າຊ່ວຍນັກຮຽນ ໃກ້ຊິດ ລວມທັງຄຳແນະນຳແລະວິທີການນຳໃຊ້ກຳນົດກິດຈະກຳແລະການຈັດຕັ້ງປະຕິບັດກິດຈະກຳທີ່ຊັດເຈນໃນແຕ່ລະຂັ້ນຕອນ.

3. ສະເໜີໃຫ້ຜູ້ບໍລິຫານ ແລະ ຄູສອນແຕ່ລະວິຊາໃຫ້ຈັດກິດຈະກຳການຮຽນ-ການສອນໃຫ້ມີຄວາມຫຼາກຫຼາຍຂຶ້ນກ່ວາເກົ່າ.

4. ຄູຄວນຫາກິດຈະກຳທີ່ສອດຄ່ອງກັບບົດຮຽນທີ່ຕົນສອນແລະສອດຄ່ອງກັບນັກຮຽນ ກິດຈະກຳການຮຽນ-ການສອນຄວນມີຄວາມຫລາກຫລາຍ.

5. ຄູຄວນສົ່ງເສີມໃຫ້ນັກຮຽນເຮັດກິດຈະກຳ ແລ້ວປະເມີນຜົນຂອງກິດຈະກຳນັ້ນໆ ເພື່ອມາປັບປຸງແກ້ໄຂໃຫ້ກິດຈະກຳນັ້ນມີຄຸນນະພາບຫລາຍຂຶ້ນກວ່າເກົ່າ.

**ຂໍ້ສະເໜີແນະສຳລັບການວິໄຈຄັ້ງຕໍ່ໄປ.**

1. ຄວນເຮັດການຄົ້ນຄວ້າເພື່ອປຽບທຽບຜົນການຮຽນ. ການສື່ສານພາສາອັງກິດໃນໄລຍະການຄຸ້ມຄອງຂອງ ຮຽນຮູ້ກັບຊຸດຂອງກິດຈະກຳການຮຽນຮູ້ ຮຽນພາສາອັງກິດ ການນຳໃຊ້ຮູບແບບການປະຕິບັດເປັນພື້ນຖານການຮຽນຮູ້ກັບສື່ການຮຽນການສອນປະເພດອື່ນໆ ເຊັ່ນ: ຄອມພິວເຕີຊ່ວຍສອນ ປຶ້ມຮຽນ, ແລະອື່ນໆ.

2. ຄວນຄົ້ນຄວ້າກ່ຽວກັບຜົນຂອງການປ່ຽນແປງພຶດຕິກຳການຮຽນພາສາອັງກິດ ແລະ ປັດໃຈຕ່າງໆ.ທີ່ມີຜົນກະທົບປະສິດທິພາບຂອງການນຳໃຊ້ຊຸດກິດຈະກຳການຮຽນຮູ້ພາສາອັງກິດໃນລະດັບຕ່າງໆເພື່ອເຮັດໃຫ້ຜົນໄດ້ຮັບທີ່ໄດ້ມາເພື່ອພັດທະນາຄຸນນະພາບການຮຽນຮູ້ຂອງນັກຮຽນໃນທຸກລະດັບ.

## ໃບກຽດຕິຄຸນ

ບົດວິໄຈນີ້ສຳເລັດລົງໄດ້ ໂດຍໄດ້ຮັບຄວາມກະລຸນາໃຫ້ຄວາມຊ່ວຍເຫຼືອ, ຮ່ວມມື, ຊີ້ນຳ ເປັນຢ່າງດີຈາກອາຈານທີ່ປຶກສາ ທີ່ໃຫ້ຄວາມຄິດເຫັນ, ຄຳແນະນຳ ແລະ ແກ້ໄຂຈຸດບົກຜ່ອງໃນທຸກຂັ້ນຕອນເພື່ອເຮັດບົດວິໄຈເຫຼັ້ມນີ້ມີຄວາມສົມບູນ. ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ມາຍັງຜູ້ອຳນວຍການ, ຂໍຂອບໃຈອາຈານທີ່ປຶກສາ, ຄູອາຈານ-ນັກຮຽນນັກສຶກສາ ແລະ ຜູ້ກ່ຽວຂ້ອງທັງໝົດທີ່ທ່ານໄດ້ຮ່ວມສົນທະນາແລກປ່ຽນຂໍ້ມູນທີ່ເປັນປະໂຫຍດຕໍ່ການກຳນົດຂໍ້ສະເໜີແນະ ແລະ ນະໂຍບາຍໃນການປັບປຸງ ແລະ ພັດທະນາຄຸນນະພາບການສຶກສາ ໃຫ້ໄດ້ຮັບຄຸນນະພາບສູງຂຶ້ນ ແລະ ຄູສອນວິຊາພາສາອັງກິດ ທີ່ໃຫ້ຂ້າພະເຈົ້າໄດ້ທົດສອບເຄື່ອງມື ແລະ ອຳນວຍຄວາມສະດວກໃນການລົງເກັບກຳຂໍ້ມູນອັນເປັນປະໂຫຍດ ໃນການຄົ້ນຄວ້າວິໄຈໃນຄັ້ງນີ້ຈົນສຳເລັດຂໍສະແດງຄວາມຂອບໃຈຄະນະປະທານ ແລະ ຄະນະກຳມະການທີ່ຮັບຜິດຊອບ ທີ່ໃຫ້ໂອກາດຂ້າພະເຈົ້າໄດ້ດຳເນີນການຄົ້ນຄວ້າວິໄຈໃນຄັ້ງນີ້ຈົນສຳ

ເລັດດ້ວຍດີ. ທ້າຍສຸດນີ້ ຜູ້ຄົ້ນຄວ້າບໍ່ມີສິ່ງໃດທີ່ຈະຕອບແທນບຸນຄຸນອັນລ້ຳຄ່າຂອງທຸກໆທ່ານ ມີແຕ່ຄຳອວຍພອນໄຊ ອັນປະເສີດຈົ່ງເກີດແກ່ທຸກໆທ່ານ ຂໍໃຫ້ມີແຕ່ຄວາມສຸກກາຍສະບາຍໃຈ ແລະ ມີຜົນສຳເລັດໃນໜ້າທີ່ວຽກງານ.

## ເອກະສານອ້າງອີງ

ກະຊວງສຶກສາທິການແລະກິລາ. (2013). *ເອກະສານ 3 ລັກສະນະ 5 ຫຼັກມູນຂອງການສຶກສາລາວ.* (ເອກະສານອັດສຳເນົາ).

ກະຊວງສຶກສາທິການແລະກິລາ. (2021). *ເອກະສານແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 9.* (ເອກະສານອັດສຳເນົາ)

ກະມົນວັນ ໂສມສີຟ້າ. (2008). *ການສຶກສາການໃຊ້ກິດຈະກຳການເວົ້າເພື່ອການສື່ສານ ໃນການພັດທະນາຄວາມສາມາດດ້ານການເວົ້າພາສາອັງກິດຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ່ 1* (ປະລິນຍານິພົນປະລິນຍາໂທ). ມະຫາວິທະຍາໄລສີນະຄະຣິນທະຣາວິໂຣດ.

ໄກສອນ ພົມວິຫານ. (1974). *ຊາບຊຶມແນວທາງການສຶກສາຂອງພັກ, ຕັ້ງໜ້າຂະຫຍາຍພາລະກິດການສຶກສາ.* (ເອກະສານອັດສຳເນົາ).

ຊານໄຊ ສະຣີໄສຍະເພັດ. (1984). *ທັກສະແລະເທັກນິກການສອນ* (ພິມຄັ້ງທີ 2). ກຸງເທບມະຫານະຄອນ: ພິທັກອັກສອນ

ນັດຖະຊາ ສຸວະວິບູນ. (2011). *ການອອກແບບພາຍໃນ: ວິໄຈເລື່ອງສະພາບ ແລະ ບັນຫາການຈັດການຮຽນການສອນວິຊາ INT212 (ການອອກແບບພາຍໃນ 2).* ຄະນະສະຖາປັດຕະຍະກຳສາດ ມະຫາວິທະຍາໄລສີປະທຸມ.

ບຸນຊົມ ສີສະອາດ. (2008). *ການວິໄຈເບື້ອງຕົ້ນ* (ພິມຄັ້ງທີ 8). ກຸງເທບມະຫານະຄອນ: ສຸວີຣິຍາສານ.

ພັກປະຊາຊົນປະຕິວັດລາວ. (2011). *ເອກະສານກອງປະຊຸມໃຫຍ່ ພັກປະຊາຊົນປະຕິວັດລາວ ສະໄໝສາມັນ ຄັ້ງທີ IX.* (ເອກະສານອັດສຳເນົາ).

Krejcie, R. V., & Morgan, D. W. (1970). Determining sample size for research activities. *Educational and Psychological Measurement*, 30(3), 607–610.

Provus, M. (1971). *Discrepancy evaluation for educational program improvement and assessment*. Berkeley, CA: McCutchan Pub. Corp.